ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກໍາ ແລະ ປ່າໄມ້

ກົມປ່າໄມ້

ເລກທີ 2522 /ກປມ

ນະຄອນຫຼວງວຽງຈັນ, ວັນທີ 11 ພ.ຈິກ 2016

# ແຈ້ງການ

**ເຖິງ:** ທ່ານ ຫົວໜ້າຂະແໜງປ່າໄມ້ແຂວງ ແລະ ນະຄອນຫຼວງວຽງຈັນ.

**ເລື່ອງ:** ການເຄື່ອນຍ້າຍໄມ້ ແລະ ເຄື່ອງປ່າຂອງດົງຢູ່ພາຍໃນ ແລະ ການສົ່ງອອກຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ ອອກຕ່າງປະເທດ.

- ອີງຕາມຄໍາສັ່ງຂອງນາຍົກລັດຖະມົນຕີ ຄໍາສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ13 ພຶດສະພາ 2016ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້ເຄື່ອນຍ້າຍໄມ້ ແລະທຸລະກິດໄມ້.
- ອີງຕາມ ມະຕິຕົກລົງ ກອງປະຊຸມຄະນະລັດຖະບານຮ່ວມກັບເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ ສະບັບເລກທີ 06/ລບ, ລົງວັນທີ 13 ກໍລະກົດ2016.
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 1887/ກປ, ລົງວັນທີ 09/08/2012, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມປ່າໄມ້.
- ອີງຕາມ ແຈ້ງການຂອງກະຊວງກະສິກໍາ ແລະ ປ່າໄມ້ ກ່ຽວກັບ ການອະນຸຍາດ ໃຫ້ເຄື່ອນຍ້າຍໄມ້ ຢູ່ພາຍໃນປະເທດ ສະບັບເລກທີ 0073/ກປ, ລົງວັນທີ  03 ພະຈິກ 2016.

ເພື່ອປະຕິບັດຕາມ ແຈ້ງການ ຂອງກະຊວງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 0073/ກປ, ລົງວັນທີ 03 ພະຈິກ 2016 ໃຫ້ມີຄວາມເປັນເອກະພາບກັນ, ກົມປ່າໄມ້ ຖືເປັນກຽດແຈ້ງໃຫ້ທ່ານຊາບວ່າ: ການເຄື່ອນຍ້າຍໄມ້ ແລະ ເຄື່ອງປ່າຂອງດົງ ໃນຂອບເຂດທົ່ວປະເທດ ຕາມຄໍາສັ່ງ, ແຈ້ງການ ແລະ ທິດຊີ້ນໍາ ຂອງລັດຖະບານ ໃນໄລຍະ ໃໝ່ ແມ່ນໃຫ້ຂະແໜງປ່າໄມ້ແຂວງ ແລະ ນະຄອນຫຼວງວຽງຈັນ ເອົາໃຈໃສ່ຈັດຕັ້ງປະຕິບັດດັ່ງລຸ່ມນີ້:

1. ການອອກໃບອະນຸຍາດເຄື່ອນຍ້າຍໄມ້ທ່ອນ, ໄມ້ເລື່ອຍ, ໄມ້ຕັບ, ໄມ້ເຄິ່ງສໍາເລັດຮູບຢູ່ພາຍໃນປະເທດ ແມ່ນໃຫ້ເລີ່ມແຕ່ວັນທີ 01 ພະຈິກ 2016 ເປັນຕົ້ນໄປ ໂດຍໃຫ້ນໍາໃຊ້ໃບອະນຸຍາດເຄື່ອນຍ້າຍທີ່ກົມປ່າໄມ້ສົ່ງໃຫ້, ບໍ່ອະນຸຍາດໃຫ້ຈັດພິມ ຫຼື ນໍາໃຊ້ໃບອະນຸຍາດຂອງຕົນເອງຢ່າງເດັດຂາດ, ກ່ອນຈະອອກໃບອະນຸຍາດເຄື່ອນຍ້າຍແຕ່ລະຄັ້ງ  ໃຫ້ກວດຄືນແຫຼ່ງທີ່ມາຂອງໄມ້ດັ່ງກ່າວເປັນຕົ້ນແມ່ນ: ໃບອະນຸຍາດຂຸດຄົ້ນໄມ້, ສັນຍາຊື້-ຂາຍໄມ້ ແລະ ການປະຕິບັດພັນທະອາກອນຕ່າງໆຕາມລະບຽບຫຼັກການໃຫ້ລະອຽດຈະແຈ້ງ, ຖ້າເຫັນວ່າຄົບຖ້ວນ ແລະ ຖືກຕ້ອງຕາມລະບຽບຫຼັກການ ແລ້ວຈຶ່ງໃຫ້ອອກໃບອະນຸຍາດເຄື່ອນຍ້າຍ ຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ. ໃນກໍລະນີຫາກພົບວ່າ: ໄມ້ດັ່ງກ່າວ ຫາກບໍ່ມີບັນຊີຢັ້ງຢືນທີ່ຖືກຕ້ອງ ຈາກຂະແໜງປ່າໄມ້ ຫຼື ບໍ່ສາມາດຢັ້ງຢືນ ແຫຼ່ງທີ່ມາຢ່າງຖືກຕ້ອງ, ບໍ່ມີສັນຍາຊື້-ຂາຍ ແລະ ບໍ່ໄດ້ປະຕິບັດພັນທະອາກອນຕ່າງໆຢ່າງຄົບຖ້ວນ, ແມ່ນຫ້າມອອກໃບອະນຸຍາດເຄື່ອນຍ້າຍຢ່າງເດັດຂາດ ແລະ ພ້ອມດຽວກັນກໍ່ໃຫ້ສົມ

ທົບກັບກອງກວດກາປ່າໄມ້ ຍຶດໄມ້ມາເປັນຂອງລັດ ແລະ ດຳເນີນຄະດີຕໍ່ເຈົ້າຂອງໄມ້ຕາມກົດໝາຍຢ່າງເຂັ້ມງວດແລ້ວຂຶ້ນບັນຊີໄມ້ຍຶດ ສົ່ງໃຫ້ຂະແໜງການກ່ຽວຂ້ອງປະມູນຂາຍ, ຫຼັງຈາກນັ້ນ ຈຶ່ງອອກໃບອະນຸຍາດເຄື່ອນຍ້າຍໄມ້ ໃຫ້ຜູ້ຊະນະການປະມູນ ຕາມລະບຽບຫຼັກການ.

2. ສຳລັບການເຄື່ອນຍ້າຍ ຜະລິດຕະພັນໄມ້ສຳເລັດຮູບຢູ່ພາຍໃນປະເທດ ແມ່ນໃຫ້ສົມທົບ ກັບ ຂະແໜງການກ່ຽວຂ້ອງ ກວດກາແຫຼ່ງທີ່ມາຂອງໄມ້ ທີ່ເອົາມາປຸງແຕ່ງ ຢ່າງລະອຽດ, ຖ້າເຫັນວ່າຖືກຕ້ອງ ແລະ ຄົບຖ້ວນ ແມ່ນມອບໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າເປັນຜູ້ອະນຸຍາດເຄື່ອນຍ້າຍ. ໃນກໍລະນີ ທີ່ກວດພົບວ່າບໍ່ມີແຫຼ່ງທີ່ມາຢ່າງຖືກຕ້ອງ ແມ່ນໃຫ້ຂຶ້ນບັນຊີຜະລິດຕະພັນ ດັ່ງກ່າວ ສົ່ງມອບໃຫ້ກອງກວດກາປ່າໄມ້ ເພື່ອດຳເນີນການສືບສວນສອບສວນຕາມກົດໝາຍ.

3. ການເຄື່ອນຍ້າຍໄມ້ທ່ອນຈາກສະໜາມ I ຫາ ສະໜາມ II ແມ່ນອະນຸຍາດໃຫ້ເຄື່ອນຍ້າຍສະເພາະແຕ່ໄມ້ທີ່ລັດຖະບານອະນຸຍາດໃຫ້ຂຸດຄົ້ນ ຢູ່ໃນເຂດກໍ່ສ້າງພື້ນຖານໂຄງລ່າງຕ່າງໆ ທີ່ລັດຖະບານໄດ້ອະນຸຍາດໃຫ້ກໍ່ສ້າງແລ້ວເທົ່ານັ້ນ (ເຊັ່ນ: ອ່າງເກັບນ້ຳຂອງໂຄງການກໍ່ສ້າງເຂື່ອນໄຟຟ້າ, ແລວທາງ, ແລວສາຍໄຟຟ້າ, ອ່າງເກັບນ້ຳຊົນລະປະທານ, ເຂດຍົກຍ້າຍຈັດສັນພູມລຳເນົາໃໝ່ ແລະ ເຂດອື່ນໆ...) ແລະ ເຂດໂຄງການຂຸດຄົ້ນເອົາແຮ່ທາດຕ່າງໆ ທີ່ລັດຖະບານອະນຸມັດໃຫ້ຂຸດຄົ້ນ ໂດຍໃຫ້ຈັດຕັ້ງປະຕິບັດຮອດວັນທີ 31 ພຶດສະພາຂອງທຸກໆປີ ແລ້ວໃຫ້ຢຸດເຊົາ ແລະ ຮັບປະກັນບໍ່ໃຫ້ມີໄມ້ຕົກຄ້າງ ຢູ່ໃນ ສະໜາມ I ຢ່າງເດັດຂາດ. ໃນກໍລະນີຫາກມີການຂຸດຄົ້ນໄມ້ກາຍຂອບເຂດທີ່ອະນຸຍາດ, ຂຸດຄົ້ນໄມ້ຢູ່ນອກຂອບເຂດບໍ່ຖືກຕາມເປົ້າໝາຍທີ່ອະນຸຍາດໃຫ້ຂຸດຄົ້ນຫຼືຫາກພົບວ່າມີການລັກລອບຂຸດຄົ້ນ ໃນເຂດອື່ນໆ ມາສວມໃສ່ ແມ່ນໃຫ້ສົມທົບກັບກອງກວດກາປ່າໄມ້ ຍຶດໄມ້ມາເປັນຂອງລັດ ແລ້ວດຳເນີນ ການສອບສວນ ແລະ ດຳເນີນຄະດີຕໍ່ ຜູ້ກະທຳຜິດຕາມກົດໝາຍຢ່າງເຂັ້ມງວດ ແລ້ວຂຶ້ນບັນຊີໄມ້ຍຶດ ສົ່ງໃຫ້ຂະແໜງການກ່ຽວຂ້ອງປະມູນຂາຍ, ຫຼັງຈາກນັ້ນຈຶ່ງອອກອະນຸຍາດເຄື່ອນຍ້າຍ ໃຫ້ຜູ້ຊະນະການປະມູນຕາມການສະເໜີ.

4. ການເຄື່ອນຍ້າຍຜະລິດຕະພັນໄມ້ອອກຕ່າງປະເທດ ໃຫ້ນຳໃຊ້ໃບແບບຟອມຢັ້ງຢືນຜະລິດຕະພັນໄມ້ (ຂຶ້ນລົດ) ເພື່ອສົ່ງອອກ ຮ່ວມກັບພະແນກອຸດສາຫະກຳ ແລະ ການຄ້າ ແລະ ພະແນກການເງິນ ຕາມທີ່ກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດ, ບໍ່ອະນຸຍາດໃຫ້ອອກໃບອະນຸຍາດເຄື່ອນຍ້າຍໄມ້ ເປັນອັນສະເພາະ ຄືທີ່ເຄີຍໄດ້ຈັດຕັ້ງປະຕິບັດຜ່ານມາ, ທັງນີ້ກໍ່ເພື່ອຄວາມເປັນ ເອກະພາບ ທັງເປັນການອຳນວຍຄວາມສະດວກ ແລະ ຫຼຸດຂັ້ນຂອດການປະກອບເອກະສານຂອງຜູ້ປະກອບການ, ແຕ່ໃນການຈັດຕັ້ງປະຕິບັດຕົວຈິງ ຕ້ອງໄດ້ເຂັ້ມງວດ ສົມທົບກັບພາກສ່ວນກ່ຽວຂ້ອງກວດຄືນແຫຼ່ງທີ່ມາເປັນຕົ້ນແມ່ນ: ໃບອະນຸຍາດຂຸດຄົ້ນໄມ້ ແລະ ສັນຍາຊື້-ຂາຍໄມ້, ການປະຕິບັດພັນທະອາກອນຕ່າງໆ ແລະ ຕ້ອງແມ່ນ ຜະລິດຕະພັນໄມ້ ເພື່ອສົ່ງອອກຕາມຂໍ້ຕົກລົງ ຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ1833/ອຄ, ລົງວັນທີ 03 ຕຸລາ 2016 ແລະ ຄຳແນະນຳ ຂອງກົມອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ1009/ກອຫ.ມຄ, ລົງວັນທີ 18 ຕຸລາ 2016, ຖ້າເຫັນວ່າຖືກຕ້ອງຄົບຖ້ວນ ແລະ ເປັນເອກະພາບກັນທັງ 3 ພາກສ່ວນແລ້ວຈຶ່ງພ້ອມກັນອອກໃບຢັ້ງຢືນຜະລິດຕະພັນໄມ້ (ຂຶ້ນລົດ)ເພື່ອສົ່ງອອກ ໃຫ້ພາກສ່ວນກ່ຽວຂ້ອງຕາມການສະເໜີ.

5. ເຄື່ອງປ່າຂອງດົງຊະນິດທີ່ເປັນອາຫານ, ເກີດຕາມລະດູການ ແລະ ຊົມໃຊ້ໃນຊີວິດປະຈຳວັນ ຂອງ ປະຊາຊົນ ແມ່ນໃຫ້ຂຸດຄົ້ນ ແລະ ສົ່ງອອກໄດ້ ເປັນຕົ້ນ: ເຫັດ, ດ້ວງແມ້, ນ້ຳເຜີ້ງ, ໝາກກໍ່, ດອກແຂມ, ໜໍ່ໄມ້, ໃບຊາ, ຄັ່ງ, ຂີ້ຊີ, ຍານ, ໝາກຈອງບານ ແຕ່ໃນການຈັດຕັ້ງປະຕິບັດຕົວຈິງ ໃຫ້ນຳສະເໜີ ພະແນກກະສິກຳ ແລະ ປ່າໄມ້ ເປັນຜູ້ພິຈາລະນາ.

6. ຊະນິດເຄື່ອງປ່າຂອງດົງ ທີ່ໃຫ້ສົ່ງອອກໄດ້ ແມ່ນຊະນິດທີ່ບໍ່ສາມາດປຸງແຕ່ງໄດ້ຢູ່ພາຍໃນ ແລະ ຊະນິດ ທີ່ບໍ່ນອນໃນບັນຊີໝວດທີ I ແລະ ໝວດທີ II ຂອງດຳລັດ 155/ນຍ, ລົງວັນທີ 30 ກັນຍາ 2003 ວ່າດ້ວຍ

ຊັບພະຍາກອນທຳມະຊາດ ທີ່ເປັນຢາ, ແຕ່ຕ້ອງມີແຜນການ ແລະ ໄດ້ຮັບອະນຸຍາດໃຫ້ຂຸດຄົ້ນ ແລະ ສົ່ງອອກຈາກລັດຖະບານເປັນແຕ່ລະປີ.

7. ເຄື່ອງປ່າຂອງດົງ ທີ່ສາມາດປຸງແຕ່ງຢູ່ພາຍໃນໄດ້ ແມ່ນສົ່ງເສີມໃຫ້ມີການປຸງແຕ່ງ ແລະ ຫ້າມສົ່ງອອກເປັນວັດຖຸດິບ ເຊັ່ນ: ໝາກຕາວ, ຫວາຍ, ເຄືອແຫມ, ດອກເຜີ້ງ ແລະ ຊະນິດເຄື່ອງປ່າຂອງດົງ ທີ່ເປັນອາຫານ ແລະ ພືດເປັນຢາ ຕາມທີ່ໄດ້ກຳນົດໄວ້ໃນໝວດທີ I ແລະ ໝວດທີ II ຂອງດຳລັດ 155/ນຍ ລົງວັນທີ 30 ກັນຍາ 2003, ແຕ່ຕ້ອງໄດ້ຮັບອະນຸມັດຕົວເລກແຜນການຂຸດຄົ້ນ ຫຼື ເກັບກູ້ ເປັນແຕ່ລະປີຈາກລັດຖະບານ.

8. ສຳລັບຖ່ານດຳທຸກຊະນິດ ແມ່ນຫ້າມສົ່ງອອກເພາະບໍ່ທັນມີການຈັດສັນ, ຄຸ້ມຄອງວັດຖຸດິບ, ການຜະລິດຍັງກະແຈກກະຈາຍ ແລະ ຍັງບໍ່ທັນມີການຈັດຕັ້ງການຜະລິດ ຫຼື ຫົວໜ່ວຍທຸລະກິດການຜະລິດ ທີ່ຖືກຕ້ອງຕາມລະບຽບຫຼັກການເທື່ອ. ເພື່ອແກ້ໄຂ ບັນຫາດັ່ງກ່າວ ໃຫ້ຂະແໜງປ່າໄມ້ ປະສານສົມທົບ ກັບ ຂະແໜງທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນກວດກາ, ເກັບກຳຂໍ້ມູນຈຳນວນເຕົາເຜົາຖ່ານໃນແຕ່ລະເຂດ ແລະ ປັບປຸງຄືນລະບົບການຜະລິດຖ່ານດຳ ຂອງ ຜູ້ປະກອບການ ແລະ ປະຊາຊົນ ລວມທັງແຫຼ່ງທີ່ມາ ຂອງວັດຖຸດິບ ເພື່ອໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

9. ສຳລັບຖ່ານຂາວ ທີ່ຜະລິດຈາກໄມ້ຕິ້ວ ແມ່ນສາມາດສົ່ງອອກໄດ້, ແຕ່ຕ້ອງໄດ້ຮັບອະນຸຍາດຕົວເລກແຜນການຂຸດຄົ້ນຈາກລັດຖະບານ, ພ້ອມດຽວກັນຜູ້ປະກອບການ ຫຼື ບໍລິສັດທີ່ດຳເນີນທຸລະກິດຜະລິດ ແລະ ສົ່ງອອກຖ່ານຂາວ ຕ້ອງໄດ້ຮັບອະນຸຍາດສ້າງຕັ້ງ ແລະ ລົງທະບຽນຖືກຕ້ອງຕາມລະບຽບກົດໝາຍແລະຕ້ອງມີແຜນການຊຸກຍູ້ສົ່ງເສີມປະຊາຊົນປູກ ແລະ ຟື້ນຟູໄມ້ຕິ້ວ. ສຳລັບໄມ້ຕິ້ວທີ່ນຳມາຜະລິດຖ່ານຂາວ ທີ່ມາຈາກແຫຼ່ງທີ່ຖືກຕ້ອງ ແລະ ໄດ້ຮັບອະນຸມັດໂກຕາຈາກລັດຖະບານ ແມ່ນສາມາດ ຂຸດຄົ້ນ ແລະ ເຄື່ອນຍ້າຍໄດ້ຕະຫຼອດປີ, ເພາະວ່າການຜະລິດຖ່ານຂາວແມ່ນຕ້ອງການໄມ້ຕິ້ວດິບມາຜະລິດ.

10. ໃຫ້ຂະແໜງປ່າໄມ້ແຂວງ, ນະຄອນຫຼວງຊຸ້ນຂ້ຽວສຳຫຼວດ, ເກັບກຳຂໍ້ມູນ ແລະ ຂຶ້ນທະບຽນສວນປູກໄມ້ຕິ້ວ ຂອງ ປະຊາຊົນ ລວມທັງ ໄມ້ຕິ້ວທີ່ປະຊາຊົນຟື້ນຟູ ໃນທີ່ດິນທີ່ເປັນກຳມະສິດຂອງຕົນເອງ ທີ່ຖືກຕ້ອງຕາມລະບຽບກົດໝາຍ ເພື່ອເປັນຂໍ້ມູນ ໃນການ ສະເໜີ ລັດຖະບານ ພິຈາລະນາ ອອກອະນຸຍາດ ແຜນການຂຸດຄົ້ນ ປະຈຳປີ.

11. ໄມ້ເກດສະໜາ, ໄມ້ອີກ ແລະ ໄມ້ກະຖິນນະລົງ ຈາກສວນປູກທີ່ສັບເປັນປ່ຽງນ້ອຍ ຫຼື ບົດເປັນຝຸ່ນ, ໄມ້ເລື່ອຍເປັນແຜ່ນ ແລະ ໄມ້ກົມ ທີ່ມີໜ້າຕ້າງ ບໍ່ເກີນ 12 ຊັງຕີແມັດ ແມ່ນສາມາດສົ່ງອອກໄດ້.

12. ໄມ້ປູກທີ່ເປັນຊະນິດໄມ້ພື້ນເມືອງອື່ນໆ (ເຊັ່ນ: ໄມ້ດູ່, ໄມ້ດູ່ລາຍ, ໄມ້ແຕ້ຂ່າ, ລວມທັງໄມ້ສັກ...) ແມ່ນໃຫ້ປຸງແຕ່ງເປັນຜະລິດຕະພັນໄມ້ສຳເລັດຮູບ ຈຶ່ງອະນຸມັດໃຫ້ສົ່ງອອກໄດ້.

13. ໄມ້ປ່ອງແມ່ນໃຫ້ສົ່ງອອກໄດ້, ແຕ່ໃຫ້ປຸງແຕ່ງເປັນຜະລິດຕະພັນເຄິ່ງສຳເລັດຮູບ ແລະ ສຳເລັດຮູບຕາມທີ່ໄດ້ກຳນົດໄວ້ໃນບັນຊີຜະລິດຕະພັນ ທີ່ອະນຸຍາດສົ່ງອອກ ຂອງ ກະຊວງອຸດສາຫະກຳ ແລະການຄ້າ.

14. ການອອກໃບອະນຸຍາດຂຸດຄົ້ນ ຫຼື ເກັບກູ້ເຄື່ອງປ່າຂອງດົງ ແລະ ໃບອະນຸຍາດເຄື່ອນຍ້າຍເຄື່ອງປ່າຂອງດົງຢູ່ພາຍໃນ ແລະ ສົ່ງອອກຕ່າງປະເທດ ໃຫ້ນຳໃຊ້ແບບຟອມທີ່ກົມປ່າໄມ້ສົ່ງໃຫ້, ບໍ່ອະນຸຍາດໃຫ້ຈັດພິມ ຫຼື ນຳໃຊ້ ແບບຟອມ ຂອງ ຕົນເອງເດັດຂາດ.

15. ການອອກໃບອະນຸຍາດເຄື່ອນຍ້າຍໄມ້ ແລະ ເຄື່ອງປ່າຂອງດົງຢູ່ພາຍໃນແມ່ນເດັດຂາດ ບໍ່ໃຫ້ອອກໃບອະນຸຍາດ ໄວ້ລ່ວງໜ້າບາດດຽວ ທີ່ເປັນຈຳນວນຫຼາຍ, ໃຫ້ອອກໃບອະນຸຍາດສະເພາະແຕ່ ຈຳນວນທີ່ຈະເຄື່ອນຍ້າຍຕົວຈິງ ແລະ ໄດ້ຜ່ານການກວດກາແລ້ວເທົ່ານັ້ນ, ໃນໃບອະນຸຍາດເຄື່ອນຍ້າຍ ຕ້ອງໄດ້ບຸລະອຽດ ກ່ຽວກັບ ໃບອະນຸຍາດຂຸດຄົ້ນຫຼື ໃບອະນຸຍາດເກັບກູ້, ຈຸດທີ່ຈະເຄື່ອນຍ້າຍອອກ(ບ້ານ/ໂຮງງານ, ເມືອງ ແລະແຂວງ), ຈຸດປາຍທາງທີ່ຈະເອົາໄມ້ ແລະ ເຄື່ອງປ່າຂອງດົງລົງ (ບ້ານ/ໂຮງງານ, ເມືອງ ແລະແຂວງ), ຊະນິດ,

ຈຳນວນແລະບໍລິມາດຫຼືນ້ຳໜັກ. ໃບອະນຸຍາດເຄື່ອນຍ້າຍໃຫ້ນຳໃຊ້ໄດ້ພຽງແຕ່ເທື່ອດຽວ ຫຼື ສຳລັບການເຄື່ອນຍ້າຍພຽງແຕ່ຖ້ຽວດຽວເທົ່ານັ້ນ.

16. ໃຫ້ເປັນເຈົ້າການກວດນັບໄມ້ ແລະ ເຄື່ອງປ່າຂອງດົງ ຂຶ້ນລົດແຕ່ລະຄັນ ພ້ອມທັງເຮັດບົດບັນທຶກ ລະອຽດ ຈະແຈ້ງກັບເຈົ້າຂອງລົດ ແລະ ເຈົ້າຂອງໄມ້ຫຼືເຈົ້າຂອງເຄື່ອງປ່າຂອງດົງ, ທັງນີ້ກໍ່ເພື່ອຫຼີກເວັ້ນ ບໍ່ໃຫ້ມີການສວຍໂອກາດໃນເວລາເຄື່ອນຍ້າຍຕົວຈິງ.

17. ໃບອະນຸຍາດເຄື່ອນຍ້າຍໄມ້ ແລະ ເຄື່ອງປ່າຂອງດົງ ແລະ ບົດບັນທຶກການເອົາໄມ້ ແລະ ເຄື່ອງປ່າຂອງດົງ ຂຶ້ນລົດແຕ່ລະຄັນ ໃຫ້ສຳເນົາສົ່ງໃຫ້ກອງກວດກາປ່າໄມ້ແຂວງ ແນວລະ 1 ສະບັບ ເພື່ອເປັນບ່ອນອີງໃນການຊ່ວຍຕິດຕາມກວດກາການເຄື່ອນຍ້າຍຕົວຈິງ.

18. ສຳລັບ ການອະນຸຍາດຂຸດຄົ້ນໄມ້ ທີ່ລັດຖະບານອະນຸມັດແມ່ນໃຫ້ນຳໃຊ້ແບບຟອມ ຫຼື ໃບອະນຸຍາດຂຸດຄົ້ນ ທີ່ກົມປ່າໄມ້ສົ່ງໃຫ້, ບໍ່ອະນຸຍາດໃຫ້ຈັດພິມນຳໃຊ້ເອງຢ່າງເດັດຂາດ. ພ້ອມດຽວກັນກໍໃຫ້ລະບຸແຈ້ງສະຖານທີ່ຂຸດຄົ້ນຕາມເຂດທີ່ລັດຖະບານອະນຸຍາດໃຫ້ຂຸດຄົ້ນ, ໂດຍໃຫ້ສຳຫຼວດຄວາມອາດສາມາດຂຸດຄົ້ນຕົວຈິງໃນແຕ່ລະປີແລະຮັບປະກັນບໍ່ໃຫ້ມີໄມ້ຕົກຄ້າງສະໜາມ I ຢ່າງເດັດຂາດ, ໝາຍວ່າບໍ່ອອກອະນຸຍາດຂຸດຄົ້ນເປັນຈຳນວນຫລາຍ. ແຕ່ລະປີກ່ອນການປິດປ່າ, ຕ້ອງສາມາດຂົນສົ່ງ ໄມ້ອອກຈາກສະໜາມ I ມາໄວ້ຢູ່ ສະໜາມ II ໃຫ້ສຳເລັດ, ເພື່ອຂຶ້ນບັນຊີ ມອບໃຫ້ຂະແໜງ ອຸດສາຫະກາ ແລະ ການຄ້າປະມູນຂາຍ ຕາມລະບຽບຫຼັກການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

ຫົວໜ້າກົມປ່າໄມ້

<u>ບ່ອນນຳສົ່ງ</u>:

- ທ່ານ ລັດຖະມົນຕີ, ຮອງລັດຖະມົນ ກະຊວງ ກປ (ເພື່ອລາຍງານ)
- ຫ້ອງກະຊວງກະສິກຳ ແລະ ປ່າໄມ້ (ເພື່ອລາຍງານ)
- ພະແນກກະສິກຳ ແລະ ປ່າໄມ້ແຂວງ (ເພື່ອຮັບຊາບ ແລະ ຊ່ວຍຊີ້ນຳ)
- ກົມກວດກາປ່າໄມ້ (ເພື່ອເປັນຂໍ້ມູນຕິດຕາມ)
- ກອງກວດກາປ່າໄມ້ ແຂວງ (ເພື່ອເປັນຂໍ້ມູນຕິດຕາມ)
- ພະແນກຄຸ້ມຄອງປ່າພະລິດ (ເພື່ອຕິດຕາມ)
- ເກັບມ້ຽນ.